## ຕິດຕໍ່ຫາ MCLO

ມີ MCLO ຈຳນວນ 33 ຄົນເຮັດວຽກຢູ່ສະຖານີຕຳຣວດ 25 ແຫ່ງທົ່ວຣັດ ນຊວ. ທ່ານສາມາດໂທຣະສັບຫາເພື່ອເຮັດການນັດໝາຍໄປພົບ ຫຼື ຈະໄປຫາພວກເຂົາເລີຍກໍໄດ້ ພາຍໃນວັນ ແລະ ຊົ່ວໂມງຣາຊການລະຫວ່າງ 9:00ໂມງເຊົ້າ ຫາ 5:00ໂມງແລງ. MCLO ມີຢູ່ຕາມສະຖານີຕຳຣວດດັ່ງຕໍ່ລົງໄປນີ້:

**Ashfield**
14 Victoria Street
Ashfield 2131
9797 4099

**Bankstown**
2 Meredith Street
Bankstown 2200
9783 2199

**Blacktown**
11 Kildare Road
Blacktown 2148
9622 0000

**Burwood**
Belmore Road
Burwood 2134
9745 8499

**Cabramatta**
243-249 Cabramatta Rd West,
Cabramatta 2166
9725 8999

**Campbelltown**
65 Queen Street
Campbelltown 2560
4620 1201

**Campsie**
58 Campsie Street
Campsie 2194
9789 0999

**Eastern Beaches**
136 Maroubra Road
Maroubra 2035
9349 9299

**Fairfield**
40-42 Smart Street
Fairfield 2165
9728 0399

**Flemington**
Corner Susan & Queen Street
Auburn 2144
9646 8699

**Green Valley**
193-195 Wilson Road
Green Valley 2168
9607 1799

**Holroyd**
15-17 Memorial Avenue
Merrylands 2160
9897 4899

**Kuring-gai**
292 Pacific Highway
Hornsby 2077
9476 9799

**Liverpool**
148 George Street
Liverpool 2170
9821 8444

**Macquarie Fields**
10 Brooks Street
Macquarie Fields 2564
9605 0479

**Mt. Druitt**
Cnr Luxford Road & Kelly Close
Mt. Druitt 2770
9675 8623

**Newcastle**
30 Harriet Street
Waratah 2298
4926 6599

**North Shore**
63 Archer Street
Chatswood 2067
9414 8499

**Parramatta**
95 Marsden Street
Parramatta 2150
9633 0799

**Rosehill**
2 Carlton Street
Granville 2142
9897 4199

**Ryde**
8 Victoria Road
Gladesville
9879 9699

**St. George**
36-38 Ormonde Parade
Hurstville 2220
9375 8599

**St Marys**
38-42 King Street
St Marys 2760
9677 7499

**Sydney City**
129 Day Street
Darling Harbour 2000
9265 6499

**Wollongong**
Cnr Church & Market Streets
Wollongong 2500
4226 7899

ຕຳຣວດສາມາດຈັດຫານາຍພາສາທີ່ຊ່ຽວຊານມາຊ່ວຍທ່ານບໍ່ວ່າຈະແມ່ນທາງໂທຣະສັບຫຼືແບບມາຊ້ອງໜ້າ. ທຸກໆພາສາຣວມທັງພາສາໃບ້ສາມາດຖືກຈັດຫາໃຫ້ໄດ້ ທຸກໆເວລາບໍ່ວ່າກາງເວັນຫຼືກາງຄືນ. ພຽງແຕ່ບອກໃຫ້ຕຳຣວດຊາບວ່າທ່ານປາກພາສາຫຍັງ.

**Triple Zero (000)**
For emergencies or life threatening situations.

**Police Assistance Line (131 444)**
For non emergencies.

**Crime Stoppers (1800 333 000)**
To provide crime information. It can be anonymous.

Follow us on facebook.com/nswpoliceforce
twitter.com/nswpolice youtube.com/thenswpolice
or visit www.police.nsw.gov.au

Laotian

NSW Police Force

# ເຈົ້າໜ້າທີ່ຕິດຕໍ່ສຳພັນຊຸມຊົນນາໆວັທນະທັມ





ໜ້າທີ່ສຳຄັນກ່ອນອື່ນໝົດຂອງກອງກຳລັງຕຳຣວດ ຣັດນິວເຊົາເວລສ໌ ແມ່ນຫຼຸດຜ່ອນອາຊຍາກັມ ແລະ ຄວາມຮຸນແຮງ ແລະ ປັບປຸງຄວາມປອດໄພຂອງສາທາຣະນະຊົນໃຫ້ດີຂຶ້ນ. ເພື່ອຈະເຮັດແບບນີ້, ຕຳຣວດຕ້ອງເຮັດວຽກຮ່ວມກັບສມາຊິກຊຸມຊົນໝົດທຸກໆຄົນຮວມເຖິງສມາຊິກຊຸມຊົນທີ່ມາຈາກພື້ນຖານທີ່ມີວັທນະທັມ ແລະ ພາສາທີ່ແຕກຕ່າງກັນ.



ເຈົ້າໜ້າທີ່ຕິດຕໍ່ສຳພັນຊຸມຊົນນາໆວັທນະທັມ (MCLO) ເປັນເຈົ້າໜ້າທີ່ພົລເຮືອນທີ່ ເຮັດວຽກໃຫ້ ກອງກຳລັງຕຳຣວດຣັດ ນຊວ ເພື່ອຊວຍບັນດາຊຸມຊົນ ສ້າງຄວາມເຊື່ອຖື ແລະ ຄວາມໝັ້ນໃຈໃນເຈົ້າໜ້າທີ່ຕຳຣວດ.

ເຖິງແມ່ນວ່າ MCLO ບໍ່ແມ່ນຕຳຣວດ ແຕ່ພວກເຂົາກໍແມ່ນເຈົ້າໜ້າທີ່ທີ່ຊ່ຽວຊານແລະໄດ້ຮັບການຝຶກຫັດໃຫ້ເຮັດວຽກຄຽງບາຄຽງໄຫຼ່ກັບຕຳຣວດ, ໃຫ້ຄຳແນະນຳໃນດ້ານບັນຫາຂອງຊຸມຊົນ ແລະ ວິທີທາງທີ່ຈະຕິດຕໍ່ພົວພັນ ແລະ ເຂົ້າໃຈບັນຫາແລະຄວາມຕ້ອງການຂອງຊຸມຊົນໃນທ້ອງຖິ່ນໃຫ້ດີຂຶ້ນ.

MCLO ອູ້ມຊູຕຳຣວດໃນເວລາທີ່ພວກເຂົາຕິດຕໍ່ພົວພັນກັບຜູ້ຄົນທີ່ອາດຈະຕ້ອງການຄວາມຊ່ວຍເຫຼືອ ແລະ ບໍຣິການເພີ້ມເພື່ອຊ່ວຍອູ້ມຊູສິ່ງເສີມຄວາມຕ້ອງການດ້ານວັທນະທັມ ສາສນາ ແລະ ພາສາຂອງພວກເຂົາ. ພວກເຂົາຕ້ອງໃຫ້ແນ່ໃຈວ່າບັນດາຊຸມຊົນຕ່າງໆ ໄດ້ເຂົ້າເຖິງບັນດາບໍຣິການດ້ານພິທັກສັນຕິທີ່ເໝາະສົມ ແລະເຂົ້າກັບນາໆວັທນະທັມແລະ ພາສາ.

ນອກຈາກນີ້ MCLO ຍັງຊ່ວຍຊຸມຊົນໃຫ້ເຂົ້າໃຈໃນສິດທິ ແລະ ໜ້າທີ່ຮັບຜິດຊອບຂອງພວກເຂົາເຈົ້າໃນເວລາທີ່ ພວກເຂົາມີການຕິດຕໍ່ພົວພັນກັບຕຳຣວດ ແລະ ຍັງສາມາດຊ່ວຍອະທິບາຍໃຫ້ຮູ້ວ່າຕຳຣວດຕອບຮັບ ແລະ ຄວບຄຸມອາຊຍາກັມ ແລະ ຄວາມປອດໄພຂອງຊຸມຊົນຢ່າງໃດ.

MCLO ອາດສາມາດໃຫ້ບໍຣິການຕ່າງໆດັ່ງຕໍ່ລົງໄປນີ້:

- ຊ່ວຍສມາຊິກຊຸມຊົນແລະສ່ວນບຸກຄົນແຈ້ງເລື້ອງອາຊຍາກັມຕໍ່ຕຳຣວດ
- ຊ່ວຍອູ້ມຊູແລະເຮັດວຽກຮ່ວມກັບຜູ້ຮັບເຄາະຈາກອາຊຍາກັມ ກັບຄອບຄົວຂອງພວກເຂົາພ້ອມທັງຊຸມຊົນ
- ຊ່ວຍອູ້ມຊູຜູ້ຮັບເຄາະຈາກຄວາມຮຸນແຮງໃນຄອບຄົວຢູ່ໃນສານ
- ໃຫ້ການແນະນຳສິ່ງຕໍ່ແລະເຂົ້າຫາບໍຣິການພິທັກສັນຕິອັນເໝາະສົມ
- ໃຫ້ການແນະນຳສິ່ງຕໍ່ແລະເຂົ້າຫາບໍຣິການຕ່າງໆຈາກຜູ້ໃຫ້ບໍຣິການອື່ນໆ
- ຈັດການສຳມະນາ ການໃຫ້ຂໍ້ມູນ ແລະ ຄຳແນະນຳກ່ຽວກັບການປ້ອງກັນອາຊຍາກັມ ຄວາມປອດໄພ ແລະ ບັນຫາພິທັກສັນຕິອື່ນໆໃຫ້ແກ່ຊຸມຊົນ
- ເຮັດວຽກກ່ຽວກັບໂຄງການການປ້ອງກັນອາຊຍາກັມຢູ່ໃນຊຸມຊົນ
- ສ້າງຄວາມສຳພັນຕິດຕໍ່ພົວພັນ ແລະ ຄວາມເປັນຜູ້ມີສ່ວນຮ່ວມກັບສມາຊິກຊຸມຊົນ ອົງການຈັດຕັ້ງພ້ອມທັງບັນດາຜູ້ນຳຊຸມຊົນຕ່າງໆ
- ເຮັດວຽກຮ່ວມກັບບັນດາຊຸມຊົນທີ່ບໍ່ໝັ້ນຄົງ ເຊັ່ນ ບັນດາຜູ້ມາຕັ້ງຖິ່ນຖານໃໝ່ ຊາວໜຸ່ມ ຜູ້ສູງອາຍຸ ຜູ້ຍິງ ບັນດາຊຸມຊົນທີ່ພວມຂຶ້ນໃໝ່ ນັກຮຽນນັກສຶກສານາໆຊາດ ຊາວອົພຍົບ ແລະ ຜູ້ລີ້ໄພການເມືອງ
- ເປັນຜູ້ຕ່າງໜ້າຕຳຣວດໃນການເຂົ້າຮ່ວມປະຊຸມກັບຊຸມຊົນໃນທ້ອງຖິ່ນ ແລະ ກັບອົງການຕ່າງໆ
- ໃຫ້ຄຳແນະນຳ ແລະ ຄວາມຊ່ວຍເຫຼືອໃນດ້ານບັນຫາກ່ຽວກັບອາຊຍາກັມໂດຍເກັບເປັນຄວາມລັບ

MCLO ສ່ວນຫຼາຍສາມາດປາກພາສາຊຸມຊົນໄດ້ນຶ່ງ ຫຼື ຫຼາຍພາສາ ແລະ ຍັງສາມາດໃຫ້ຄວາມຊ່ວຍເຫຼືອດ້ານພາສາໃນເວລາທີ່ຕ້ອງການໄດ້.

ເພື່ອຫຼຸດຜ່ອນ ແລະ ປ້ອງກັນອາຊຍາກັມ ແລະ ເຮັດໃຫ້ປະຊາຊົນປອດໄພ ຕຳຣວດຕ້ອງເພິ່ງຊຸມຊົນໃນການລາຍງານເລື້ອງອາຊຍາກັມແລະໃຫ້ຂໍ້ມູນກ່ຽວກັບຄວາມປອດໄພ ຂອງພວກເຂົາ ແລະເພື່ອນບ້ານຂອງພວກເຂົາ. MCLO ຂອງທ່ານສາມາດຊ່ວຍທ່ານລາຍງານເລື້ອງອາຊຍາກັມ ແລະ ເລື້ອງຄວາມປອດໄພຂອງທ່ານຕໍ່ຕຳຣວດໄດ້.



